ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງສາທາລະນະສຸກ ເລກທີ 1441 / ກຊສ

ວຽງຈັນ, ວັນວັນທີ 13 ສິງຫາ 2003

# ຂໍ້ກຳນົດວ່າດ້ວຍການຂຶ້ນທະບຽນຢາ

- ອີງຕາມ ກົດຫມາຍວ່າດ້ວຍຢາແລະຜະລິດຕະພັນການແພດ ສະບັບເລກທີ 01/ສພຊ, ລົງວັນທີ 08 ເມສາ 2000.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສາທາລະນະສຸກ ສະບັບເລກທີ 020/ ນຍ, ລົງວັນທີ 9 ມີນາ 1999.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີກ່ຽວກັບການຮັບຮອງເອົານະໂຍບາຍແຫ່ງຊາດດ້ານຢາຂອງ ສ ປ ປ ລາວ ສະບັບເລກທີ 49/ນຍ, ລົງວັນທີ 13 ມີນາ 1993.
- ອີງຕາມ ການສະເຫນີຂອງກົມອາຫານ ແລະ ຢາ ແລະ ການຄົ້ນຄ້ວາຂອງກົມມະຫາພາກ ແລະ ການນຳຂອງກະຊວງສາທາລະນະສຸກ.

## ລັດຖະມົນຕີວ່າການກະຊວງສາທາລະນະສຸກອອກຂໍ້ກຳນົດ:

## ໝວດທີ 1

## ຫຼັກການລວມ

### ມາດຕາ 1. ນິຍາມ ແລະ ຄວາມໝາຍຄຳສັບ

1. **ຢາ :** ແມ່ນວັດຖຸຢ່າງຫນຶ່ງ ຫລື ວັດຖຸປະກອບຫລາຍຢ່າງ ທີ່ອອກລິດ ແລະ ບໍ່ອອກລິດປະສົມເຂົ້າກັນທີ່ນຳໃຊ້ສຳລັບກັນ ແລະ ປິ່ນປົວພະຍາດ, ຊ່ວຍໃນການພິສູດ ແລະ ບົ່ງມະຕິພະຍາດ, ບັນເທົາອາການເຈັບປວດ, ດັດແກ້, ປັບປຸງ, ເຊີດຊູ, ບຳລຸງ, ຮັກສາ ຫຼື ປ່ຽນແປງໜ້າທີ່ການ ຂອງຮ່າງກາຍ, ຟື້ນຟູສຸຂະພາບກາຍ ແລະ ຈິດໃຈຂອງຄົນ;

**ໝາຍເຫດ** : ສຳລັບຜະລິດຕະພັນທີ່ມີຜົນຕໍ່ສຸຂະພາບໂດຍທາງອ້ອມ ແລະ ມີລັກສະນະເສີມສ້າງທາງດ້ານສຸຂະພາບເຊັ່ນ: ອາຫານເສີມການແພດ, ຜະລິດຕະພັນອາຫານເສີມທີ່ມີສ່ວນປະກອບຂອງສານວິຕາມິນໃນຂະໜາດຄວາມແຮງເທົ່າກັບການກຳນົດວ່າແມ່ນຢາ, ໃນກໍລະນີນີ້ ການພິຈາລະນາຂຶ້ນທະບຽນ ຈະອີງໃສ່ການຢັ້ງຢືນຂອງເຈົ້າໜ້າທີ່ຄຸ້ມຄອງຂອງປະເທດຜູ້ຜະລິດເປັນຫຼັກ.

2. **ຢາປອມ** ແມ່ນຢາຫຼວງ ຫຼື ຢາພື້ນເມືອງໃດໜຶ່ງທີ່ມີການປອມແປງ, ລອກແບບ ຫຼື ຮຽນແບບ ຈາກຜະລິດຕະພັນຢາທີ່ໄດ້ຜະລິດ, ຈຳຫນ່າຍ ແລະ ໄດ້ຂຶ້ນທະບຽນຢ່າງຖືກຕ້ອງແລ້ວ;
3. **ຢາໃໝ່** ແມ່ນຢາຫລວງ ຫຼື ຢາພື້ນເມືອງໃດຫນຶ່ງ ຊຶ່ງການນຳໃຊ້ໄດ້ຮັບຜົນ ແຕ່ຄຸນລັກສະນະຍັງບໍ່ທັນໄດ້ມີການກຳນົດອອກຢ່າງຄົບຖ້ວນ ແລະ ລະບຸໄວ້ໃນເອກະສານການແພດສາກົນ ຫລື ບໍ່ທັນໄດ້ຂຶ້ນທະບຽນຢູ່ໃນປະເທດຕົ້ນກຳເນີດ ຫຼື ໄດ້ຂຶ້ນທະບຽນແລ້ວແຕ່ອາຍຸຕໍ່າກ່ວາ ຫ້າປີ ຫລື ແຕກຕ່າງທາງດ້ານສູດຕຳລາ, ແບບວິທີນຳໃຊ້, ຮູບແບບ ແລະການຫຸ້ມຫໍ່ຈາກຢາທີ່ໄດ້ຂຶ້ນທະບຽນແລ້ວ;

4. **ຕໍາລາຢາ ແມ່ນ**ສູດຕໍາລາທີ່ໄດ້ລະບຸສ່ວນປະກອບເພື່ອປຸງແຕ່ງໃນນັ້ນ ປະກອບດ້ວຍທາດຢາຮອ່ມຢູ່ນໍາ ແລະ ສາມາດນໍາເອົາສູດຕໍາລານັ້ນໄປປຸງແຕ່ງ ໂດຍຜ່ານຂະບວນການຜະລິດຢາຕາມຫຼັກການຜະລິດຢາທີ່ດີ ເພື່ອໃຫ້ໄດ້ຢາສໍາເລັດຮູບບໍ່ວ່າຈະຢູ່ໃນຮູບແບບໃດກໍ່ຕາມ ຊຶ່ງ ພ້ອມທີ່ຈະນໍາໄປໃຊ້ສໍາລັບຄົນ;

5. **ສະຫລາກຢາ** ແມ່ນເອກະສານແນະນໍາກ່ຽວກັບຢາ ທີ່ຕິດຢູ່ນໍາພາຊະນະບັນຈຸທຸກຂະໜາດ ເຊັ່ນ: ກັບ,ກວດ ແກ້ວ ແລະ ຫລອດຢາເປັນຕົ້ນ ຊຶ່ງຕອ້ງມີເນື້ອໃນດັ່ງນີ້:
   - ຊື່ຢາ(ຊື່ການຄ້າ ແລະ ຊື່ເອກະພາບສາກົນ) ຮູບແບບ ແລະ ຄວາມແຮງ.
   - ຕໍາລາຢາ ແລະ ປະລິມານຕົວຢາບັນຈຸໃນຫນຶ່ງຫົວຫນ່ວຍ,
   - ຫົວຫນ່ວຍມັດທໍ່
   - ວັນເດືອນປີຜະລິດ(Manufactured Date) ຫຼື ມື້ຫມົດອາຍຸ(Expired Date)
   - ເລກຊຸດຜະລິດ(Lot No.), ເລກກວດກາ(Control No.),ເລກຂຶ້ນທະບຽນ (Registration No.)
   - ຂໍ້ບົ່ງໃຊ້ (ຄຸນປະໂຫຍດ)
   - ຄໍາແນະນໍາວິທີໃຊ້
   - ຄໍາເຕືອນ ແລະ ຂໍ້ຫ້າມໃຊ້
   - ຖ້າເປັນຢາອັນຕະລາຍ ຫຼື ຢາຈໍາກັດຂອບເຂດການນໍາໃຊ້ ຕ້ອງບົ່ງບອກຄໍາວ່າ”ຢາອັນຕະລາຍ”, “ ໃຊ້ສະເພາະໂຮງຫມໍ “ ເປັນຕົວໜັງສືສີແດງ ແລະຢູ່ໃນຂອບສີແດງ
   - ເງື່ອນໄຂເກັບມ້ຽນ ແລະ ຮັກສາ
   - ຊື່ໂຮງງານຜູ້ຜະລິດ ແລະ ທີ່ຢູ່ຄົບຖ້ວນ
   - ເນື້ອໃນຂອງສະຫລາກຕ້ອງຂຽນເປັນພາສາລາວ ແລະ/ຫລື ອັງກິດ , ຝຣັ່ງ

**ມາດຕາ 2.** ການຂຶ້ນທະບຽນຜະລິດຕະພັນຢາ ແມ່ນການແຈ້ງຊື່ ແລະ ສູດຕໍາລາຢາຈາກຜູ້ຜະລິດເປັນລາຍລັກອັກສອນ ຊຶ່ງຫມາຍເຖິງການສະແດງລາຍການ ຂອງວັດຖຸທີ່ໃຊ້ເປັນສ່ວນປະກອບຂອງຢາ,ໃນນັ້ນໄດ້ລະບຸຮູບແບບ, ນໍ້າຫນັກ, ຫົວໜ່ວຍມັດທໍ່ ແລະ ປະລິມານຂອງແຕ່ລະລາຍການ ຢ່າງຈະແຈ້ງ.

**ມາດຕາ 3.** ການຂຶ້ນທະບຽນຢາແມ່ນເພື່ອອໍານວຍຄວາມສະດວກໃນການຄຸ້ມຄອງ ແລະ ກວດກາ ຊຶ່ງສາມາດຄວບຄຸມໄດ້ໃນຂັ້ນຕອນຂອງການຜະລິດ, ການແບ່ງບັນຈຸໃນປະເທດ ຫຼື ນໍາເຂົ້າຈາກຕ່າງປະເທດ ແລະ ການຈໍລະຈອນແຈກຢາຍໃຫ້ມີຄວາມປອດໄພ, ມີປະສິດທິພາບ ແລະ ຄຸນະພາບມາດຕະຖານໃນການກັນ ແລະ ປິ່ນປົວພະຍາດ.

**ມາດຕາ 4.** ທຸກຜະລິດຕະພັນຢາທີ່ຈະຈໍາຫນ່າຍໃນ ສ ປ ປ ລາວຕ້ອງໄດ້ຂຶ້ນທະບຽນຢູ່ກົມອາຫານ ແລະ ຢາ ກະຊວງສາທາລະນະສຸກ.

## ໝວດທີ 2

## ວ່າດ້ວຍຫລັກການຂອງການຂຶ້ນທະບຽນຢາ

**ມາດຕາ 5.** ການຂຶ້ນທະບຽນຕໍາລາຢາ ແມ່ນອີງໃສ່ນະໂຍບາຍແຫ່ງຊາດດ້ານຢາ, ບັນຊີຢາພື້ນຖານສະ ບັບທີ່ພວມປະກາດໃຊ້ ແລະ ຢາຈໍາເປັນສະເພາະໃຊ້ໃນຂະແໜງການ ທີ່ໄດ້ຮັບການຢັ້ງຢືນເຖິງຄວາມຈໍາເປັນໃຊ້ຢ່າງເປັນທາງການຈາກຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 6.** ຜະລິດຕະພັນຢາທີ່ບໍ່ຈໍາເປັນຂໍຂຶ້ນທະບຽນ ມີດັ່ງລຸ່ມນີ້ :

1. ວັດຖຸທີ່ເປັນເຄມີພັນທາງການຢາ ຫຼື ເຄມີພັນທາງການຢາເຄິ່ງສຳເລັດຮູບຊຶ່ງບໍ່ແມ່ນຢາສຳເລັດຮູບເຊັ່ນ: ທາດເຄມີທີ່ເປັນວັດຖຸດິບ;
2. ຢາພື້ນເມືອງທີ່ບໍ່ໄດ້ຜ່ານການປຸງແຕ່ງ, ບໍ່ມີການບັນຈຸສະເພາະ ແລະ ບໍ່ໄດ້ກຳນົດສູດຕຳລາເຊັ່ນ: ຮາກໄມ້, ລຳຕົ້ນ, ເປືອກ,ເຫງົ້າ, ຫົວ, ໃບ, ດອກ, ແກ່ນ ແລະ ອື່ນໆ;
3. ຢາປຸງແຕ່ງຫັດຖະກຳ ນັບທັງຢາຫຼວງ ແລະ ຢາພື້ນເມືອງທີ່ທາງການອະນຸຍາດ;
4. ຢາເພື່ອນຳມາວິໄຈ, ວິເຄາະ, ຄົ້ນຄ້ວາ, ຊ່ວຍເຫລືອ ແລະ ຮັບໃຊ້ພາຍໃນສະຖານທູດ, ແຕ່ ຕ້ອງແມ່ນຢາທີ່ໄດ້ຂຶ້ນທະບຽນ ແລະ ອະນຸຍາດຈຳຫນ່າຍຈາກອົງການຄຸ້ມຄອງຢາຂອງປະເທດຜູ້ຜະລິດ ຫລື ສົ່ງອອກ ແລະ ຕ້ອງໄດ້ຜ່ານການກວດກາຈາກກົມອາຫານ ແລະ ຢາ ກະຊວງສາທາລະນະສຸກ;

**ມາດຕາ 7. ຜູ້ທີ່ມີສິດຂໍຂຶ້ນທະບຽນຕຳລາຢາ.**

1. ຜູ້ທີ່ໄດ້ຮັບອະນຸຍາດຢ່າງເປັນທາງການໃນການຜະລິດ, ການນຳເຂົ້າ ຢາສາກົນ ຫລື ພື້ນເມືອງ ເພື່ອຈຳໜ່າຍໃນ ສປປ ລາວ.
2. ໂຮງງານຜູ້ຜະລິດ ຫລື ບໍລິສັດແມ່ຜູ້ສົ່ງອອກທີ່ມີທະບຽນຖືກຕ້ອງຂອງປະເທດກ່ຽວຂ້ອງ ໂດຍຜ່ານຕົວແທນ ເຊິ່ງແມ່ນບໍລິສັດພາຍໃນທີ່ໄດ້ຮັບອະນຸຍາດຢ່າງເປັນທາງການ ໃນການດຳເນີນທຸ ລະກິດນຳເຂົ້າ (ຢາສາກົນ ຫລື ພື້ນເມືອງ) ເພື່ອຈຳຫນ່າຍ ຫຼື ຫ້ອງການຜູ້ຕາງຫນ້າຂອງບໍລິສັດແມ່ ທີ່ໄດ້ຮັບອະນຸມັດຢ່າງເປັນທາງການ ໂດຍຮູບການມອບສິດໃນການດຳເນີນງານທີ່ເປັນເອກະພາບກັນທັງສອງພາກສ່ວນທີ່ກ່າວມາຂ້າງເທິງ.
3. ເຈົ້າຂອງຜະລິດຕະພັນທີ່ມີສູດຕຳລາຢາພື້ນເມືອງ ເພື່ອນຳໃຊ້ເຂົ້າໃນການກັນ ແລະ ປິ່ນປົວພະ ຍາດ ຊຶ່ງມີຂໍ້ມູນທີ່ສະແດງເຖິງ ຄວາມປອດໄພ ແລະ ປະສິດທິຜົນຂອງຢາ.

**ໝວດທີ 3**

**ການປະກອບເອກະສານ ແລະ ຫຼັກການພິຈາລະນາ**

**ການຂຶ້ນທະບຽນຕຳລາຢາ.**

**ມາດຕາ 8. ການປະກອບເອກະສານ**

1. ສຳລັບຢາທີ່ຜະລິດພາຍໃນ ຜູ້ທີ່ມີຈຸດປະສົງຢາກຜະລິດຢາຕ້ອງຍື່ນຄຳຮ້ອງຂໍຜະລິດຢາຕົວແບບ ຕາມຮ່າງຄຳຮ້ອງ ຜຢ 1. ພາຍຫລັງໄດ້ຮັບອະນຸຍາດໃຫ້ຜະລິດຢາຕົວແບບ ໂຮງງານຜູ້ຜະລິດ ຈະຕ້ອງໄດ້ປະກອບຄຳຮ້ອງຂຶ້ນທະບຽນຢາຕາມແບບ ຜຢ 2 ພາຍໃນກຳນົດ 3 ເຖິງ 6 ເດືອນ;
2. ສຳລັບຢາທີ່ນຳເຂົ້າຈາກຕ່າງປະເທດ ຜູ້ທີ່ມີຈຸດປະສົງຢາກນຳຢາເຂົ້າຈາກຕ່າງປະເທດຈະຕ້ອງຍື່ນ ຄຳຮ້ອງ ຂໍອະນຸຍາດນຳເຂົ້າຢາຕົວແບບ ຕາມຮ່າງຄຳຮ້ອງ ນຂ 1. ພາຍຫລັງໄດ້ຮັບອະນຸຍາດນຳເຂົ້າຢາຕົວແບບ ບໍລິສັດກ່ຽວຂ້ອງຕ້ອງໄດ້ປະກອບຄຳຮ້ອງ ນຂ 2 ພາຍໃນກຳນົດ 3 ເຖິງ 6 ເດືອນ.

**ມາດຕາ 9. ຫຼັກການພິຈາລະນາຄຳຮ້ອງຂໍຂຶ້ນທະບຽນຢາ**

1. ຄຳຮ້ອງຂໍຂຶ້ນທະບຽນຢາຈະໄດ້ຮັບການພິຈາລະນາກໍຕໍ່ເມື່ອໄດ້ປະຕິບັດຕາມ ມາດຕາ 5, ມາດຕາ 7 ແລະມາດຕາ 8 ຢ່າງຄົບຖ້ວນ;
2. ຄຳຮ້ອງຂໍຂຶ້ນທະບຽນຢາຈະຖືກປະຕິເສດໃນກໍລະນີດັ່ງນີ້:
   ກ. ເອກກະສານບໍ່ຄົບຖວ້ນ ຕາມທີ່ໄດ້ລະບຸໄວ້ໃນໃບຄຳຮອ້ງແບບ ຜຢ1, ຜຢ2 ນຂ1, ນຂ2;
   ຂ. ໄດ້ແຈ້ງໃຫ້ດັດແກ້ບາງຢ່າງທີ່ບໍ່ຖືກຕອ້ງ ແຕ່ບໍ່ມີການປ່ຽນແປງ;
   ຄ. ໄລຍະຍື່ນໃບຄຳຮອ້ງຂໍຂຶ້ນທະບຽນຕາມແບບຜຢ 2 ຫຼື ນຂ 2 ກາຍ 12 ເດືອນ;
   ງ. ຢາທີ່ຖືກກຳນົດໃນບັນຊີຢາຕອ້ງຫ້າມຂອງ ສປ ປລາວ;

ສ. ຢາທີ່ບໍລິສັດແມ່ຜູ້ຜະລິດລຶບລ້າງຫຼື ຖອນທະບຽນ;

ຊ. ຢາໃຫ່ມ ຕາມຄຳນິຍາມທີ່ໄດ້ລະບຸໄວ້ໃນມາດຕາ 1.3;

ຍ. ຢາທີ່ປະກອບມີຕົວຢາ ກາຍ 3 ຕົວຢາຫຼັກ ( Active Ingredients). ຍົກເວັ້ນຈຳພວກວິຕາ ມິນລວມ ແລະ ສານຈຳເປັນປົກກະຕິຂອງຮ່າງກາຍ (ກົດອາມິນ, ແຮ່ທາດ, ຢາໃຊ້ພາຍນອກທີ່ເປັນຢາສາມັນປະຈຳບ້ານ, ຢາພື້ນເມືອງ);

ດ. ຢາທີ່ມີລັກສະນະຮຽນແບບ ທາງດ້ານເຄື່ອງຫຸ້ມຫໍ່ ແລະ ຊື່ການຄ້າທີ່ໄດ້ມີການຮັບຮອງໃຫ້ຂຶ້ນທະບຽນກ່ອນແລ້ວ.

**ມາດຕາ 10. ຫຼັກການພິຈາລະນາຂຶ້ນທະບຽນຢາ**

- ຄະນະກຳມະການຂຶ້ນທະບຽນຢາ ທີ່ຖືກແຕ່ງຕັ້ງຈາກລັດຖະມົນຕີວ່າການກະຊວງສາທາລະນະສຸກ ເປັນຜູ້ຕົກລົງການຂຶ້ນທະບຽນຢາ;
- ສຳລັບລາຍການຢາທີ່ກົງກັບເງື່ອນໄຂທີ່ໄດ້ກ່າວໄວ້ໃນມາດຕາທີ 5, ກົມອາຫານ ແລະ ຢາ ເປັນອົງການມີສິດອຳນາດອອກໃບທະບຽນຢາໄດ້ເລີຍ, ສ່ວນລາຍການຢາທີ່ບໍ່ກົງກັບເງື່ອນໄຂ ທີ່ໄດ້ກ່າວໃນມາດຕາທີ 5 ຕ້ອງໄດ້ຮັບການພິຈາລະນາຈາກຄະນະກຳມະການຂຶ້ນທະບຽນຢາ;
- ໄລຍະຂອງການພິຈາລະນາອອກໃບທະບຽນແມ່ນຢູ່ພາຍໃນກຳນົດ 180 ວັນ;
- ຢາທີ່ໄດ້ຮັບອະນຸມັດຂຶ້ນທະບຽນແລ້ວ, ກົມອາຫານ ແລະ ຢາຈະໄດ້ອອກເລກທະບຽນ ແລະ ໃບຢັ້ງຢືນ. ຈາກນັ້ນ ຜູ້ໄດ້ຮັບອະນຸຍາດ ຈຶ່ງມີສິດຜະລິດ ຫຼື ນຳເຂົ້າໄດ້;
- ຢາທີ່ບໍ່ເຄີຍນຳເຂົ້າ ສປປ ລາວມາກ່ອນ ຫຼື ຢາສູດໃຫ່ມຊຶ່ງຜະລິດເພື່ອຈຸດປະສົງປິ່ນປົວພະຍາດທີ່ຮ້າຍແຮງເຊັ່ນ: ເອດສ, ຕັບອັກເສບ, ມະເຮັງ, ຫົວໃຈ-ເສັ້ນເລືອດ....ອາດຈະພິຈາລະນາບົນເງື່ອນໄຂດັ່ງນີ້:

ກ. ເປັນຢາທີ່ໄດ້ຂຶ້ນທະບຽນໃນບາງປະເທດແລ້ວເຊັ່ນ:

- ໜຶ່ງໃນບັນດາປະເທດຂອງກຸ່ມ ສະຫະພາບຢູຣົບ ( EUROPEAN UNION )
- ສະຫະລັດອະເມລິກາ
- ອົດສະຕາລີ
- ຍີ່ປຸ່ນ

ຂ. ສາມາດຕອບສະໜອງເອກະສານເພີ້ມຕື່ມດ້ານ : ພິດເບື່ອວິທະຍາ, ເພສັດວິທະຍາ, ກົນໄກການອອກລິດຂອງຢາ, ຊີວະຄົງທົນ ແລະ ການທົດລອງທາງດ້ານການປິ່ນປົວ ( Toxicology, Pharmacology, Pharmaco-kinetic, Bio-availability and Clinical trials ).

**ມາດຕາ 11. ຫຼັກການໃນການຮັບຄຳຮ້ອງຂໍຂຶ້ນທະບຽນຢາ**

- ການຮັບຄຳຮ້ອງຂໍຂຶ້ນທະບຽນຢາ ປະຕິບັດອາທິດລະ1 ວັນໃນທຸກໆ ວັນສຸກ;
- ສຳລັບລາຍການຢາທີ່ຖືວ່າເປັນຢາໃຫມ່ທີ່ໄດ້ລະບຸໄວ້ໃນມາດຕາ 1.3 ຕ້ອງປະກອບເອກະສານທີ່ຢັ້ງຢືນເຖິງຄວາມປອດໄພ ແລະ ການມີປະສິດທິຜົນ ໂດຍຄັດຕິດຂໍ້ມູນຂອງການສຶກສາຢ່າງຄົບຖ້ວນ.
- ກໍລະນີລາຍການຢາທີ່ບໍ່ຈຳເປັນກວດກາວິໄຈຄືນ. ກ່ອນການອະນຸຍາດຂຶ້ນທະບຽນນັ້ນ ຈະຖືກເກັບຕົວແບບໃນຂັ້ນຕອນການນຳເຂົ້າມາຈຳໜ່າຍ. ໃນກໍລະນີຂາດສານມາດຕະຖານເພື່ອວິໄຈຄຸນະພາບ, ບໍລິສັດກ່ຽວຂ້ອງຕ້ອງສະໜອງສານມາດຕະຖານພ້ອມເອກະສານທີ່ຈຳເປັນອື່ນ ໆ.
- ແບບຟອມຄຳຮ້ອງຕອ້ງແມ່ນສະບັບຕົ້ນທີ່ມີກາຈ້ຳສີແດງ ແລະ ມີຈຳໜ່າຍຢູ່ກົມອາຫານແລະຢາ.
- ເອກະສານຢັ້ງຢືນອື່ນໆ: ຖ້າແມ່ນສະບັບສຳເນົາ ຕອ້ງໄດ້ເຊັນຢັ້ງຢືນສຳເນົາຖືກຕອ້ງ ຕາມສະບັບ ເດີມຈາກບໍລິສັດ.

**ມາດຕາ 12. ວ່າດ້ວຍເລກລະຫັດທະບຽນຢາ.**

ຢາທີ່ໄດ້ຮັບການຂຶ້ນທະບຽນແລ້ວຈະມີເລກໝາຍ ດັ່ງນີ້:

- ຢາສາກົນຜະລິດພາຍໃນປະເທດມີເລກຫມາຍຄື= XX(ເດືອນ) LXX XX(ຕົວເລກ)/ປີ ຄສ.
- ຢາພື້ນເມືອງທີ່ຜະລິດພາຍໃນປະເທດມີເລກຫມາຍຄື = XX(ເດືອນ)LTXXXX (ຕົວເລກ)/ປີຄສ.
- ຢາສາກົນ ທີ່ນຳເຂົ້າມາໃນປະເທດ ມີເລກຫມາຍຄື: XX(ເດືອນ) I XXXX( ຕົວເລກ )/ ປີຄສ.
- ຢາພື້ນເມືອງທີ່ນຳເຂົ້າມາໃນປະເທດ ມີເລກຫມາຍຄື = XX (ເດືອນ)ITXXXX(ຕົວເລກ)/ປີ ຄສ.

ຢາທີ່ໄດ້ຮັບອະນຸມັດອອກເລກທະບຽນແລ້ວເຈົ້າຂອງຜະລິດຕະພັນ ເຊັ່ນ:ຜູ້ຜະລິດ, ຜູ້ນຳເຂົ້າ ຫຼື ຜູ້ສົ່ງອອກຕ້ອງໄດ້ພິມເລກທະບຽນນັ້ນໃສ່ໃນສະຫຼາກ, ກັບ, ກອ້ງ, ແຜງ, ຫຼອດຢາເປັນຕົ້ນ.

ສຳລັບຢານຳເຂົ້າທຸກລາຍການຫາກບໍ່ມີເງື່ອນໄຂພິມເນື້ອໃນທີ່ຈຳເປັນໃນສະຫຼາກຢາເປັນພາສາລາວ ບໍລິສັດທີ່ຮັບຜິດຊອບການນຳເຂົ້າ ແລະ ຈຳຫນ່າຍຕ້ອງປະກອບເອກະສານກຳກັບຢາເປັນພາສາລາວເພີ້ມເຕີມໃສ່ໃນກັບຢາທຸກຂະຫນາດບັນຈຸ ກ່ອນການນຳໄປຈຳຫນ່າຍ.

**ມາດຕາ 13. ສິດຂອງຜູ້ໄດ້ຮັບອະນຸຍາດ**

ລາຍການຢາໃດທີ່ໄດ້ຮັບອະນຸມັດໃຫ້ຂຶ້ນທະບຽນຢູ່ ສປປ ລາວແລ້ວ, ຜູ້ໄດ້ຮັບອະນຸຍາດມີສິດ ນຳເຂົ້າລາຍການຢານັ້ນ ພຽງຜູ້ດຽວເທົ່ານັ້ນ.

## ໝວດທີ 4
## ການລົບລ້າງ ແລະ ອາຍຸຂອງໃບຢັ້ງຢືນການຂຶ້ນທະບຽນ

**ມາດຕາ 14.** ຢາທີ່ໄດ້ຮັບການຂຶ້ນທະບຽນໄວ້ແລ້ວອາດຖືກລົບລ້າງ ຖ້າຫາກຢານັ້ນເກີດມີລັກສະນະຢ່າງໃດຢ່າງຫນຶ່ງ ຕໍ່ໄປນີ້:

1. ບໍ່ມີຄຸນປະໂຫຍດ ຫຼືຂາດມາດຕະຖານຄຸນນະພາບ ຫຼືບໍ່ມີທັງສອງຢ່າງຕາມທີ່ຂຶ້ນທະບຽນໄວ້;
2. ຫາກພົບເຫັນວ່າບໍ່ປອດໄພແກ່ຜູ້ຊົມໃຊ້;
3. ກໍລະນີບໍລິສັດແມ່ຜູ້ຜະລິດປະກາດລົບລ້າງ;
4. ກໍລະນີເປັນຢາທີ່ຖືກກຳນົດໃນບັນຊີຢາຕອ້ງຫ້າມຂອງ ສ ປ ປ ລາວ;
5. ຢາທີ່ໄດ້ຮັບການຂຶ້ນທະບຽນແລ້ວ ຈະຖືກລົບລ້າງ ຖ້າຫາກບໍ່ໄດ້ນຳເຂົ້າຕະຫຼອດອາຍຸຂອງໃບຢັ້ງຢືນຂຶ້ນທະບຽນ.

**ມາດຕາ 15.** ອາຍຸໃບຢັ້ງຢືນການຂຶ້ນທະບຽນຢາ ມີກຳນົດໃຊ້ 3 ປີ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ພາຍໃນ 90 ວັນກອ່ນໝົດອາຍຸກຳນົດໃຊ້, ເຈົ້າຂອງທະບຽນຕອ້ງໄດ້ຍື່ນຄຳຮອ້ງເພື່ອຂໍຕໍ່ທະບຽນໄປຍັງກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ. ຖ້າບໍ່ປະຕິບັດຕາມວັນເວລາດັ່ງກ່າວທະບຽນຢານັ້ນຖືວ່າລົບລ້າງ.

## ໝວດທີ 5
## ວ່າດ້ວຍການເກັບຄ່າທຳນຽມ

**ມາດຕາ 16.** ເຈົ້າຂອງຜະລິດຕະພັນທີ່ຂໍຂຶ້ນທະບຽນຢາ ຕ້ອງໄດ້ຈ່າຍຄ່າທຳນຽມ ແຕ່ລະລາຍການດັ່ງລຸ່ມນີ້:

- ຄ່າບໍລິການວິຊາສະເພາະ, ແບບຟອມໃບຄຳຮອ້ງ, ພອ້ມດວ້ຍເອກະສານປະກອບຕ່າງໆ;

- ຄ່າກວດກາວິໄຈຄຸນນະພາບ ຫຼື ຄ່າທຳນຽມຕິດຕາມຄຸນະພາບ ຫຼັງການຈຳໜ່າຍ (Post-marketing surveillences )

- ຄ່າຂຶ້ນທະບຽນຢາ :

  + ຢາສາກົນທີ່ຜະລິດພາຍໃນ 30 ໂດລາ/ 1 ລາຍການ.
  + ຢາສາກົນທີ່ນຳເຂົ້າ 100 ໂດລາ/ 1 ລາຍການ.
  + ຢາພື້ນເມືອງພາຍໃນ 15 ໂດລາ/ 1 ລາຍການ.
  + ຢາພື້ນເມືອງທີ່ນຳເຂົ້າ 50 ໂດລາ/ 1 ລາຍການ.

**ໝາຍເຫດ:** ວິທີການເກັບຄ່າທຳນຽມໃນການຂຶ້ນທະບຽນຢາ ມີດັ່ງນີ້ :

- ຄ່າທຳນຽມ 50% ຂອງການຂຶ້ນທະບຽນ ແລະ 100 % ຂອງຄ່າກວດກາວິໄຈ ຈະຕອ້ງໄດ້ຈ່າຍໃນເວລາຍື່ນຄຳຮ້ອງຄັ້ງທີ່ 2 ( ຜຢ 2, ນຂ 2 ).
- ສ່ວນຄ່າທຳນຽມຂຶ້ນທະບຽນທີ່ເຫຼືອອີກ 50% ຈະຕອ້ງໄດ້ຈ່າຍໃນເວລາໄດ້ຮັບໃບຢັ້ງຢືນການຂຶ້ນທະບຽນ.
- ລາຍການຢາທີ່ບໍ່ຖືກຮັບຮອງຂຶ້ນທະບຽນ, ເຈົ້າຂອງຜະລິດຕະພັນບໍ່ມີສິດທວງເອົາຄ່າທຳນຽມຄືນໄດ້.
- ຖ້າໂຮງງານຜູ້ຜະລິດ ຫຼື ບໍລິສັດນຳເຂົ້າມີການປ່ຽນແປງບາງຈຸດໃດໜຶ່ງ ທີ່ໄດ້ຂຶ້ນທະບຽນໄວ້ແລ້ວເຊັ່ນ: ຂະໜາດບັນຈຸຂອງຜະລິດຕະພັນ, ທີ່ຢູ່ຂອງຕົວແທນບໍລິສັດ ແລະ ອື່ນໆ, ຕ້ອງປະກອບແບບຟອມສະເພາະ ແລະ ຈ່າຍຄ່າທຳນຽມ 5%ຂອງມູນຄ່າຂຶ້ນທະບຽນ.

## ໝວດທີ 6
## ວ່າດ້ວຍຂໍ້ຫ້າມ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 17.** ຫ້າມບຸກຄົນ, ນິຕິບຸກຄົນ ປອມແປງສູດຕຳລາຢາຕາມຊື່ການຄ້າ ຫຼື ຊື່ເອກະພາບສາກົນທີ່ໄດ້ຮັບການຂຶ້ນທະບຽນໄວ້ແລ້ວ.

**ມາດຕາ 18.** ຫ້າມບຸກຄົນ ຫຼື ນິຕິບຸກຄົນ ຜະລິດຢາ, ນຳເຂົ້າ ແລະ ຈຳໜ່າຍຢາໂດຍບໍ່ໄດ້ຮັບອະນຸຍາດ ແລະ ບໍ່ໄດ້ຂຶ້ນທະບຽນຢູ່ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ.

**ມາດຕາ 19.** ບຸກຄົນ ຫຼື ນິຕິບຸກຄົນໃດທີ່ລະເມີດຕໍ່ມາດຕາ 17, 18 ຂອງຂໍ້ກຳນົດສະບັບນີ້ ຈະຖືກປະຕິບັດຕາມມາດຕະການ ຄືດັ່ງລຸ່ມນີ້:

- ຄັ້ງທີ1 : ຢຶດຜະລິດຕະພັນ ແລະ ກ່າວເຕືອນ;
- ຄັ້ງທີ2 : ຢຶດຜະລິດຕະພັນ, ກ່າວເຕືອນ ແລະ ປັບໄໝ 100 % ຂອງມູນຄ່າຢາທີ່ຈຳໜ່າຍໃນທ້ອງຕະຫຼາດ ຕໍ່ນຶ່ງລາຍການ ພອ້ມທັງປິດກິດຈະການ 1 ປີ;
- ຄັ້ງທີ3 : ຢຶດຜະລິດຕະພັນ, ກ່າວເຕືອນ ແລະ ປັບໄໝ200 % ຂອງມູນຄ່າຢາທີ່ຈຳໜ່າຍໃນທ້ອງຕະຫຼາດ ຕໍ່ນຶ່ງລາຍການ ພອ້ມທັງປິດກິດຈະການຢ່າງຖາວອນ.

## ໝວດທີ 7
## ວ່າດ້ວຍການຈັດຕັ້ງປະຕິບັດ

**ມາດຕາ 20.** ມອບໃຫ້ກົມອາຫານ ແລະ ຢາ ເປັນໃຈກາງຮັບຜິດຊອບໃນການຈັດຕັ້ງປະຕິບັດຂໍ້ກຳນົດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 21.** ທຸກອົງການຈັດຕັ້ງທີ່ກ່ຽວຂ້ອງທັງພາກລັດ ແລະ ເອກະຊົນຈົ່ງໃຫ້ຄວາມຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດ ເປັນຢ່າງດີ.

**ມາດຕາ 22.** ຂໍ້ກຳນົດສະບັບນີ້ນຳໃຊ້ເພື່ອປ່ຽນແທນຂໍ້ກຳນົດສະບັບເລກທີ613/ກຊສ,ລົງວັນທີ6/4/1995.

**ມາດຕາ 23.** ຂໍ້ກຳນົດສະບັບນີ້ ມີຜົນສັກສິດນັບຕັ້ງແຕ່ ມື້ລົງລາຍເຊັນ ເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງສາທາລະນະສຸກ

ດຣ. ປອນເມກ ດາລາລອຍ